ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0903 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2013

# ຂໍ້ຕົກລົງ
# ວ່າດ້ວຍຕະຫຼາດ

- ອີງຕາມ ກົດໝາຍວ່າດ້ວຍ ວິສາຫະກິດສະບັບເລກທີ 11/ສພຊ, ລົງວັນທີ 09 ພະຈິກ 2005.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.

## ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ຫລັກການທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການ ແລະ ມາດຕະຖານ ກ່ຽວກັບການສ້າງຕັ້ງ, ການຈັດສັນ ແລະ ຄຸ້ມຄອງຕະຫຼາດ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຊຸກຍູ້ການແລກປ່ຽນ, ຊື້-ຂາຍສິນຄ້າ ພາຍໃນຕະຫຼາດ, ຮັບປະກັນການສະໜອງສິນຄ້າທີ່ມີຄຸນນະພາບ, ຄວາມປອດໄພໃຫ້ແກ່ສັງຄົມ ແລະສິ່ງແວດລ້ອມ, ປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ບັນດາເຜົ່າໃຫ້ດີຂຶ້ນ.

### ມາດຕາ 2. ຕະຫຼາດ

ຕະຫຼາດໃນຂໍ້ຕົກລົງສະບັບນີ້ ໝາຍເຖິງ ຕຶກອາຄານ ຫຼື ສະຖານທີ່ ທີ່ຖືກກຳນົດ, ພັດທະນາ ແລະ ນຳໃຊ້ໃຫ້ເປັນບ່ອນພົວພັນຊື້-ຂາຍ ແລະ ແລກ ປ່ຽນ ສິນຄ້າ ລະຫວ່າງບຸກຄົນ, ນິຕິບຸກຄົນ ດ້ວຍກັນ.

### ມາດຕາ 3. ການອະທິບາຍຄຳສັບ

ຄຳສັບໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. ການພັດທະນາຕະຫຼາດ ໝາຍເຖິງ ການປັບປຸງຕະຫຼາດໃຫ້ໄດ້ມາດຕະຖານ, ອຳນວຍຄວາມສະດວກໃຫ້ແກ່ ການພົວພັນຊື້-ຂາຍ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ມີການຂະຫຍາຍຕົວ ແລະ ກາຍເປັນຕະຫຼາດທີ່ທັນສະໄໝ;

2. ຈັດສັນຕະຫຼາດ ໝາຍເຖິງ ການບໍລິຫານຈັດການ ການຈັດສະຖານທີ່, ຄວາມເປັນລະບຽບຮຽບຮ້ອຍ, ສຸຂະອານາໄມ, ການຮັກສາຄວາມປອດໄພ ການຮັກສາຄວາມສະຫງົບ ແລະ ການຈໍລະຈອນສິນຄ້າ ພາຍໃນຕະຫຼາດ;

3. ຄຸ້ມຄອງຕະຫຼາດ ໝາຍເຖິງ ການຕິດຕາມ, ກວດກາ ແລະ ແນະນຳ ກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວພາຍໃນຕະຫຼາດ ໃຫ້ໄດ້ຕາມມາດຕະຖານ ແລະ ເງື່ອນໄຂຂອງຂໍ້ຕົກລົງສະບັບນີ້;

4. ຜູ້ບໍລິຫານຈັດການຕະຫຼາດ ໝາຍເຖິງ ເຈົ້າຂອງກິດຈະການ ຫຼື ຜູ້ດຳເນີນທຸລະກິດຕະຫຼາດໃຫ້ເຊົ່າ/ຊື້ ຫ້ອງ ຫຼື ຮ້ານຂາຍ.

### ມາດຕາ 4. ຫຼັກການພື້ນຖານການພັດທະນາຕະຫຼາດ

ການພັດທະນາຕະຫຼາດຕ້ອງປະຕິບັດຕາມຫຼັກການພື້ນຖານຄື:

1. ແທດເໝາະກັບແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດ, ຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍຂອງລັດຖະບານໃນການພັດທະນາຕະຫຼາດ;
2. ແທດເໝາະກັບບໍລິມາດສິນຄ້າ ທີ່ຈໍລະຈອນ ຢູ່ທ້ອງຖິ່ນ ຫຼື ເຂດນັ້ນໆ;
3. ສົ່ງເສີມຂະຫຍາຍຕະຫຼາດຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ, ເຂດພູດອຍ ຄຽງຄູ່ກັບການອານຸລັກຮີດຄອງປະເພນີ ແລະ ວັດທະນາທຳຂອງປະຊາຊົນບັນດາເຜົ່າ.

### ມາດຕາ 5. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ລວມທັງການຈັດຕັ້ງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວທຸລະກິດກ່ຽວກັບຕະຫຼາດຢູ່ພາຍໃນ ສປປ ລາວ. ແຕ່ບໍ່ກວມເອົາ ບັນດາຫ້າງ, ຮ້ານຊັບພະສິນຄ້າ ແລະ ສູນການຄ້າ ຊຶ່ງຈະໄດ້ກຳນົດໄວ້ໃນ ລະບຽບການສະເພາະ.

## ໝວດທີ 2
## ການສ້າງຕັ້ງ, ຂະໜາດ, ມາດຕະຖານ ແລະ ເງື່ອນໄຂກ່ຽວກັບຕະຫຼາດ

### ມາດຕາ 6. ການສ້າງຕັ້ງຕະຫຼາດ

ການສ້າງຕັ້ງຕະຫຼາດ ແມ່ນການກໍ່ສ້າງຕຶກ, ອາຄານ ຫຼື ສະຖານທີ່ ເພື່ອເປັນບ່ອນພົວພັນຊື້-ຂາຍ ແລະ ແລກປ່ຽນສິນຄ້າ ໂດຍໄດ້ຮັບອະນຸຍາດ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 7. ຂະໜາດຂອງຕະຫຼາດ**

ຕະຫຼາດຖືກແບ່ງຕາມຂະໜາດຄື:

1. ຕະຫຼາດໃຫຍ່;
2. ຕະຫຼາດກາງ;
3. ຕະຫຼາດນ້ອຍ.

**ມາດຕາ 8. ຕະຫຼາດໃຫຍ່**

ຕະຫຼາດໃຫຍ່ຕ້ອງມີມາດຕະຖານ ແລະ ເງື່ອນໄຂຄື:

1. ເນື້ອທີ່ຕຶກອາຄານ 3,601 ຕາແມັດຂຶ້ນໄປ;
2. ຕຶກອາຄານຕ້ອງມີໂຄງສ້າງຖາວອນ; ພື້ນຕຶກອາຄານ ແຂງລຽບພຽງ ແລະ ບໍ່ມີນ້ຳຂັງ; ຫຼັງຄາມຸງດ້ວຍວັດຖຸທົນໄຟ; ແຂງແຮງທົນທານ; ຄວາມສູງຂອງຫຼັງຄາຕ້ອງມີຄວາມເໝາະສົມໃນການລະບາຍອາກາດຢູ່ພາຍໃນເພື່ອຊ່ວຍລະບາຍອາກາດໂດຍວິທີທຳມະຊາດ. ສຳລັບຕຶກອາຄານທີ່ມີລະບົບລະບາຍອາກາດ ຫຼັງຄາບໍ່ຈຳເປັນສູງຫຼາຍກໍ່ໄດ້;
3. ມີຈຳນວນ 400 ຮ້ານຂຶ້ນໄປ, ຂະໜາດຂອງຮ້ານຂາຍ 3x3 ແມັດຂຶ້ນໄປ;
4. ບ່ອນວາງຂາຍສິນຄ້າ ຕ້ອງສູງຈາກ ພື້ນຢ່າງໜ້ອຍ 60 ຊັງຕີແມັດ, ທາງຍ່າງສຳລັບຜູ້ຊື້ພາຍໃນຕຶກອາຄານ ມີຄວາມກວ້າງບໍ່ຕ່ຳກວ່າ 1,5 ແມັດ;
5. ມີຫ້ອງການຈັດສັນຕະຫຼາດ;
6. ສະຖານທີ່ຈອດລົດເໝາະສົມສຳລັບຜູ້ຊື້ ແລະ ຜູ້ຂາຍ;
7. ມີຈຸດບໍລິການວັດແທກ-ຊັ່ງຜອງ;
8. ມີສາງ ຫຼື ເຄື່ອງແຊ່ເຢັນສຳລັບການເກັບຮັກສາອາຫານສົດເຊັ່ນ: ຜັກ, ຊີ້ນ, ປາ;
9. ທາງອ້ອມຕຶກອາຄານ, ທາງເຂົ້າ-ອອກ ລວງກວ້າງ 4 ແມັດຂຶ້ນໄປ;
10. ຫ້ອງນ້ຳຕ້ອງຕັ້ງຢູ່ບ່ອນເໝາະສົມນອກຕຶກອາຄານ, ເປັນຫ້ອງນ້ຳທີ່ສະອາດ ແລະ ພຽງພໍປະກອບດ້ວຍລະບົບກັ່ນຕອງທີ່ໄດ້ມາດຕະຖານ;
11. ມີລະບົບລະບາຍນ້ຳເສຍ;
12. ມີລະບົບແສງສະຫວ່າງພຽງພໍ ສາມາດອ່ານໜັງສືໄດ້;
13. ມີຈຸດກວດກາຄຸນນະພາບສິນຄ້າ, ສຸຂະອະນາໄມພືດ ແລະ ສັດ;
14. ບ່ອນຄຽນຖ່າຍສິນຄ້າ ຕ້ອງໃຫ້ມີຢູ່ບໍລິເວນໃດໜຶ່ງຢ່າງເປັນລະບຽບ ເພື່ອຮອງຮັບສິນຄ້າໃນແຕ່ລະມື້ ແລະ ຕ້ອງຢູ່ໃກ້ກັບຕຶກອາຄານເພື່ອສະດວກໃນການຂົນສິນຄ້າ;
15. ມີການແບ່ງເຂດສິນຄ້າແຕ່ລະປະເພດ;
16. ມີລະບົບປ້ອງກັນອັກຄີໄພ, ລະບົບນ້ຳປະປາຢ່າງພຽງພໍ;
17. ມີຮົ້ວອ້ອມຕະຫຼາດ;
18. ມີບ່ອນເກັບມ້ຽນຂີ້ເຫຍື້ອ.

**ມາດຕາ 9. ຕະຫຼາດກາງ**

ຕະຫຼາດກາງຕ້ອງມີມາດຕະຖານ ແລະ ເງື່ອນໄຂຄື:

1. ເນື້ອທີ່ ຕຶກອາຄານແຕ່ 900 ຫາ 3,600 ຕາແມັດ;
2. ຕຶກອາຄານຕ້ອງມີໂຄງສ້າງຖາວອນ; ພື້ນຕຶກອາຄານ ແຂງລຽບພຽງ ແລະ ບໍ່ມີນ້ຳຂັງ; ຫຼັງຄາມຸງດ້ວຍວັດຖຸທົນໄຟ; ແຂງແຮງທົນທານ; ຄວາມສູງຂອງຫຼັງຄາຕ້ອງມີຄວາມເໝາະສົມໃນການລະບາຍອາກາດຢູ່ພາຍໃນເພື່ອຊ່ວຍລະບາຍອາກາດໂດຍວິທີທຳມະຊາດ. ສຳລັບຕຶກອາຄານທີ່ມີລະບົບລະບາຍອາກາດ ຫຼັງຄາບໍ່ຈຳເປັນສູງຫຼາຍກໍ່ໄດ້;
3. ມີຈຳນວນແຕ່ 100 ຫາ 400 ຮ້ານ, ຂະໜາດຂອງຮ້ານຂາຍ 3x3 ແມັດຂຶ້ນໄປ ;
4. ບ່ອນວາງຂາຍສິນຄ້າ ຕ້ອງສູງຈາກ ພື້ນຢ່າງໜ້ອຍ 60 ຊັງຕີແມັດ, ທາງຍ່າງສຳລັບຜູ້ຊື້ພາຍໃນຕຶກອາຄານ ມີຄວາມກວ້າງບໍ່ຕ່ຳກວ່າ 1,5 ແມັດ;
5. ມີຫ້ອງການຈັດສັນຕະຫຼາດ;
6. ສະຖານທີ່ຈອດລົດເໝາະສົມ;
7. ມີຈຸດບໍລິການວັດແທກ-ຊັ່ງຜອງ;
8. ມີເຄື່ອງແຊ່ເຢັນສຳລັບການເກັບຮັກສາອາຫານສົດເຊັ່ນ: ຜັກ, ຊີ້ນ, ປາ;
9. ທາງອ້ອມຕຶກອາຄານ, ທາງເຂົ້າ-ອອກ ລວງກວ້າງ 4 ແມັດຂຶ້ນໄປ;
10. ຫ້ອງນ້ຳຕ້ອງຕັ້ງຢູ່ບ່ອນເໝາະສົມນອກຕຶກອາຄານ, ເປັນຫ້ອງນ້ຳທີ່ສະອາດ ແລະ ພຽງພໍ ປະກອບດ້ວຍລະບົບກັ່ນຕອງທີ່ໄດ້ມາດຕະຖານ;
11. ມີລະບົບລະບາຍນ້ຳເສຍ;
12. ມີລະບົບແສງສະຫວ່າງພຽງພໍ;
13. ມີຈຸດກວດກາຄຸນນະພາບສິນຄ້າ, ສຸຂະອະນາໄມພືດ ແລະ ສັດ;
14. ບ່ອນຄຽນຖ່າຍສິນຄ້າ ຕ້ອງໃຫ້ມີຢູ່ບໍລິເວນໃດໜຶ່ງຢ່າງເປັນລະບຽບ ເພື່ອຮອງຮັບສິນຄ້າໃນແຕ່ລະມື້ ແລະ ຕ້ອງຢູ່ໃກ້ກັບຕຶກອາຄານເພື່ອສະດວກໃນການຂົນສິນຄ້າ;
15. ມີການແບ່ງເຂດສິນຄ້າແຕ່ລະປະເພດ;
16. ມີລະບົບປ້ອງກັນອັກຄີໄພ, ລະບົບນ້ຳປະປາຢ່າງພຽງພໍ;
17. ມີຮົ້ວອ້ອມຕະຫຼາດ;
18. ມີບ່ອນເກັບມ້ຽນຂີ້ເຫຍື້ອ;

**ມາດຕາ 10. ຕະຫຼາດນ້ອຍ**

ຕະຫຼາດຂະໜາດນ້ອຍຕ້ອງມີມາດຕະຖານ ແລະ ເງື່ອນໄຂຄື:

1. ເນື້ອທີ່ອາຄານ ຕ່ຳກວ່າ 900 ຕາແມັດ;
2. ມີໂຄງສ້າງອາຄານຖາວອນ ຫຼື ເຄິ່ງຖາວອນ, ພື້ນແຂງລຽບພຽງ ແລະ ບໍ່ມີນ້ຳຂັງ, ຄວາມສູງຂອງຫຼັງຄາຕ້ອງມີຄວາມເໝາະສົມໃນການລະບາຍອາກາດຂອງຕະຫຼາດ ເພື່ອຊ່ວຍລະບາຍອາກາດໂດຍວິທີທຳມະຊາດ;
3. ມີຈຳນວນແຕ່ 50 ຫາ 100 ຮ້ານ, ຂະໜາດຂອງຮ້ານຂາຍ 3x3 ແມັດຂຶ້ນໄປ;

4. ບ່ອນວາງຂາຍສິນຄ້າ ຕ້ອງສູງຈາກ ພື້ນຢ່າງໜ້ອຍ 60 ຊັງຕີແມັດ, ທາງຍ່າງພາຍໃນອາຄານ ສໍາລັບຜູ້ຊື້ ມີຄວາມກວ້າງບໍ່ຕໍ່າກວ່າ 1,5 ແມັດ;
5. ມີຫ້ອງຈັດສັນຕະຫຼາດ;
6. ມີສະຖານທີ່ຈອດລົດເໝາະສົມ;
7. ມີຈຸດບໍລິການວັດແທກ-ຊັ່ງຜອງ;
8. ຫ້ອງນໍ້າຕ້ອງຕັ້ງຢູ່ບ່ອນເໝາະສົມນອກອາຄານ;
9. ມີລະບົບລະບາຍນໍ້າເສັຍ;
10. ຕິດຕັ້ງບັ້ງດັບເພີງຕາມຄວາມເໝາະສົມ;
11. ມີບ່ອນເກັບມ້ຽນຂີ້ເຫຍື້ອ;
12. ມີລະບົບປ້ອງກັນອັກຄີໄພ, ລະບົບນໍ້າປະປາຢ່າງພຽງພໍ;
13. ມີຮົ້ວອ້ອມຕະຫຼາດ;
14. ມີບ່ອນເກັບມ້ຽນຂີ້ເຫຍື້ອ.

**ມາດຕາ 11. ເງື່ອນໄຂຂອງຜູ້ທີ່ຂໍອະນຸຍາດສ້າງຕັ້ງຕະຫຼາດ**

ຜູ້ທີ່ຂໍອະນຸຍາດສ້າງຕັ້ງຕະຫຼາດຕ້ອງມີເງື່ອນໄຂດັ່ງນີ້:

1. ພົນລະເມືອງລາວ;
2. ຕ້ອງມີ ທຶນພຽງພໍເຂົ້າໃນການກໍ່ສ້າງຕະຫຼາດ.

**ມາດຕາ 12. ຂັ້ນຕອນການຂໍອະນຸຍາດສ້າງຕັ້ງຕະຫຼາດ**

ຜູ້ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງຕະຫຼາດຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ປະກອບເອກະສານ ເປັນຕົ້ນ: ໃບຄໍາຮ້ອງ, ມີເອກະສານການສໍາຫຼວດ, ອອກແບບ ທີ່ໄດ້ຜ່ານການຮັບຮອງຢ່າງຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ ແລະ ບົດສະເໜີໂຄງການ ໂດຍມີການຢັ້ງຢືນຜ່ານ ອົງການ ປົກຄອງທ້ອງຖິ່ນ ທີ່ຕະຫຼາດຈະຕັ້ງຢູ່;
2. ມີເອກະສານຢັ້ງຢືນສິດນໍາໃຊ້ທີ່ດິນ ຫຼື ເອກະສານຢັ້ງຢືນໃຫ້ນໍາໃຊ້ທີ່ດິນ;
3. ຖ້າເປັນດິນລັດແມ່ນໃຫ້ໄປຂໍອະນຸຍາດ ສໍາປະທານຈາກຂະແໜງແຜນການ ແລະ ການລົງທຶນ;
4. ນໍາສະເໜີພະແນກອຸດສາຫະກໍາ ແລະ ການຄ້າແຂວງ,ນະຄອນຫຼວງ ສໍາລັບຕະຫຼາດຂະໜາດໃຫຍ່ ຫຼື ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງຕາມການແບ່ງຂັ້ນຄຸ້ມຄອງສໍາລັບຕະຫຼາດຂະໜາດກາງ ແລະ ນ້ອຍ;
5. ພະແນກອຸດສາຫະກໍາ ແລະການຄ້າ ແຂວງ, ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກໍາ ແລະການຄ້າເມືອງ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຄົ້ນຄວ້າແລ້ວ ນໍາສະເໜີຕໍ່ອົງການປົກຄອງ ທີ່ມີສິດໃນການອະນຸຍາດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;
6. ຂໍຂຶ້ນທະບຽນວິສາຫະກິດ ດໍາເນີນທຸລະກິດໃຫ້ການບໍລິການເຊົ່າຫ້ອງ ແລະ ຈັດສັນຕະຫຼາດ (ໃນກໍລະນີທີ່ຍັງບໍ່ມີໃບທະບຽນວິສາຫະກິດໃນການດໍາເນີນທຸລະກິດດ້ານນີ້);
7. ພາຍຫຼັງທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງແລ້ວ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ຕິດຕາມ ແລະ ກວດກາ ການ

ເຄື່ອນໄຫວດຳເນີນທຸລະກິດຕາມລະບຽບການທີ່ ວາງໄວ້ ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 13. ການແບ່ງຂັ້ນອະນຸຍາດສ້າງຕັ້ງຕະຫຼາດ**

1. **ຕະຫຼາດໃຫຍ່** ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລ້ວນຳສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອຕົກລົງອະນຸຍາດສ້າງຕັ້ງ;
2. **ຕະຫຼາດ ກາງ, ນ້ອຍ** ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເປັນຜູ້ພິຈາລະນາໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງແລ້ວນຳສະເໜີຕໍ່ເຈົ້າເມືອງ ເພື່ອຕົກລົງອະນຸຍາດສ້າງຕັ້ງ.

## ໝວດທີ 3
## ຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ

**ມາດຕາ 14. ຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ**

ຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ ແມ່ນ ຄະນະທີ່ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນ ຫຼື ເຈົ້າເມືອງ ຕາມຂະໜາດຂອງຕະຫຼາດ ເພື່ອດຳເນີນການຈັດສັນ ແລະ ຄຸ້ມຄອງຕະຫຼາດ, ປະກອບດ້ວຍ: ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງ ການເງິນ, ເຈົ້າໜ້າທີ່ ປກສ ແລະ ຂະແໜງການອື່ນທີ່ຈຳເປັນ.

**ມາດຕາ 15. ໜ້າທີ່ຂອງຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ.**

ຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດມີໜ້າທີ່ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ແນະນຳ ກ່ຽວກັບການເຄື່ອນໄຫວດຳເນີນທຸລະກິດຢູ່ພາຍໃນຂອບເຂດຂອງຕະຫຼາດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຂໍ້ຕົກລົງສະບັບນີ້;
2. ເກັບກຳສະພາບ ການຈັດສັນ, ການປຸກສ້າງ, ການໃຫ້ສຳປະທານໃນການສ້າງ ແລະ ແຜນການພັດທະນາຕະຫຼາດ ແລ້ວລາຍງານອຳນາດການປົກຄອງທ້ອງຖິ່ນ ເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ ໃນແຕ່ລະໄລຍະ;
3. ຕັດສິນບັນຫາໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ພ້ອມນັ້ນໃຫ້ລາຍງານບັນຫາດັ່ງກ່າວໃຫ້ອຳນາດການປົກຄອງ ແຂວງ, ນະຄອນຫຼວງ, ເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຊາບເພື່ອຂໍທິດແກ້ໄຂບັນຫາຄົງຄ້າງໃນແຕ່ລະໄລຍະ.

**ມາດຕາ 16. ກົດລະບຽບຂອງຕະຫຼາດ**

ຕະຫຼາດຕ້ອງມີກົດລະບຽບສະເພາະ ແລະ ກຳນົດເນື້ອໃນ ຢ່າງຮັດກຸມ ເພື່ອເຮັດໃຫ້ ບຸກຄົນ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການເຄື່ອນໄຫວແລກ ປ່ຽນຊື້-ຂາຍສິນຄ້າ ແລະ ການບໍລິການໃນຂອບ

ເຂດຕະຫຼາດ ຕ້ອງໄດ້ປະຕິບັດຢ່າງເຂັ້ມງວດ. ກົດລະບຽບຂອງຕະຫຼາດແມ່ນຜູ້ບໍລິຫານຈັດການຕະຫຼາດເປັນຜູ້ວາງອອກ ໂດຍການຮັບຮອງຈາກອົງການຄຸ້ມຄອງວຽກງານຕະຫຼາດແຕ່ລະຂັ້ນ.

ເພື່ອຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ມອບໃຫ້ກົມການຄ້າພາຍໃນກໍານົດຫຼັກການລວມ ໃນການຮ່າງກົດລະບຽບຂອງຕະຫຼາດ.

## ໝວດທີ 4
## ສິດ ແລະ ພັນທະຂອງຄະນະກໍາມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ

### ມາດຕາ 17. ສິດຂອງຄະນະກໍາມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ

ຄະນະກໍາມະການຈັດສັນ ແລະ ຄຸ້ມຄອງຕະຫຼາດມີສິດດັ່ງນີ້:

1. ຄຸ້ມຄອງຊັບສິນບັດ ແລະບັນດາກິດຈະການຕ່າງໆທີ່ເປັນຂອງລັດຢູ່ພາຍໃນຕະຫຼາດ;
2. ແນະນໍາການຈັດສັນ ສະຖານທີ່ ຢູ່ພາຍໃນຕະຫຼາດໃຫ້ໄປຕາມຂໍ້ຕົກລົງສະບັບນີ້;
3. ສຶກສາອົບຮົມ ແລະໄກ່ເກ່ຍຜູ້ທີ່ລະເມີດກົດລະບຽບຂອງຕະຫຼາດ.

### ມາດຕາ 18. ພັນທະຂອງຄະນະກໍາມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ

ຄະນະກໍາມະການຈັດສັນແລະ ຄຸ້ມຄອງຕະຫຼາດມີພັນທະດັ່ງນີ້:

1. ຈັດຕັ້ງໂຄສະນາເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ຂໍ້ມູນຂ່າວສານທາງດ້ານເສດຖະກິດ ແລະ ພັນທະຂອງຊາວຄ້າ-ຂາຍ;
2. ສະຫຼຸບສັງລວມ ແລະ ລາຍງານສະພາບການເຄື່ອນໄຫວ ການດໍາເນີນທຸລະກິດຂອງຕະຫຼາດໃຫ້ຂະແໜງການທີ່ກ່ຽວຂ້ອງ ກໍ່ຄືອໍານາດການປົກຄອງເປັນແຕ່ລະໄລຍະ (ເດືອນ, ງວດ, ປີ);
3. ປະຕິບັດພັນທະອື່ນໆຕາມລະບຽບກົດໝາຍ.

## ໝວດທີ 5
## ສິດ ແລະ ພັນທະຂອງຜູ້ບໍລິຫານຈັດການຕະຫຼາດ

### ມາດຕາ 19. ສິດຂອງຜູ້ບໍລິຫານຈັດການຕະຫຼາດ

ຜູ້ບໍລິຫານຈັດການຕະຫຼາດມີສິດດັ່ງນີ້:

1. ເຊັນສັນຍາເຊົ່າ ຫຼື ນໍາໃຊ້ຮ້ານ, ຫ້ອງຂາຍ ແລະ ສະຖານທີ່ດໍາເນີນທຸລະກິດກັບຊາວຄ້າ-ຂາຍຕາມລະບຽບກົດໝາຍ;
2. ລະດົມທຶນເຂົ້າໃນການກໍ່ສ້າງຕະຫຼາດ;
3. ມີສິດສະເໜີຕໍ່ພາກລັດ ເພື່ອປັບປຸງ ຫຼື ສ້ອມແປງ, ຟື້ນຟູ ແລະ ຍົກລະດັບຕະຫຼາດ.

### ມາດຕາ 20. ພັນທະຂອງຜູ້ບໍລິຫານຈັດການຕະຫຼາດ

ຜູ້ບໍລິຫານຈັດການຕະຫຼາດມີພັນທະດັ່ງນີ້:

1. ສ້າງກົດລະບຽບຄຸ້ມຄອງຂອງຕະຫຼາດ;

2. ໃນກໍລະນີຈຳນວນຜູ້ທີ່ມີຈຸດປະສົງເຂົ້າມາດຳເນີນທຸລະກິດ ຢູ່ພາຍໃນຕະຫຼາດ ຫຼາຍກວ່າຈຳນວນ ຮ້ານ, ຫ້ອງຂາຍ ແລະ ສະຖານທີ່ບໍລິການ ຕ້ອງໃຫ້ມີການຈັດຕັ້ງການປະມູນ;
3. ຕ້ອງເສຍພັນທະຕ່າງໆໃຫ້ລັດຕາມລະບຽບກົດໝາຍ;
4. ເປັນເຈົ້າການປຸກລະດົມຊາວຄ້າ-ຂາຍຕິດລາຄາສິນຄ້າເປັນເງິນກີບ;
5. ຕ້ອງຕິດຕັ້ງຊິງກາງຢູ່ພາຍໃນຕະຫຼາດຢ່າງໜ້ອຍ 1 ຈຸດ;
6. ຕ້ອງຕິດຕັ້ງລະບົບໂທລະໂຂ່ງຢູ່ພາຍໃນຕະຫຼາດ;
4. ຮັບປະກັນວຽກງານປ້ອງກັນຄວາມສະຫງົບ, ປ້ອງກັນອັກຄີໄພ, ສິ່ງແວດລ້ອມ ແລະ ສຸກຂາອະນາໄມໃນຂອບເຂດຕະຫຼາດ;
5. ສະຫຼຸບສັງລວມ ແລະ ລາຍງານສະພາບການເຄື່ອນໄຫວ ການດຳເນີນທຸລະກິດຂອງຕະຫຼາດໃຫ້ຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ ເປັນແຕ່ ລະໄລຍະ (ເດືອນ, ງວດ, ປີ);
6. ປະຕິບັດພັນທະອື່ນໆຕາມລະບຽບກົດໝາຍ.

## ໝວດທີ 6
## ສິດ ແລະ ພັນທະຂອງຊາວຄ້າ-ຂາຍ

### ມາດຕາ 21. ສິດຂອງຊາວຄ້າ-ຂາຍ

ຊາວຄ້າ-ຂາຍມີສິດດັ່ງນີ້:

1. ເຊົ່າ/ຊື້ ຮ້ານ ຫຼື ຫ້ອງຂາຍ ນຳ ຜູ້ບໍລິຫານຈັດການຕະຫຼາດ;
2. ຂຶ້ນທະບຽນຢ່າງຖືກຕ້ອງ;
3. ເຄື່ອນໄຫວຊື້-ຂາຍສິນຄ້າທີ່ຖືກຕ້ອງ;
4. ໂອນສິດນຳໃຊ້ໃຫ້ຜູ້ອື່ນເຊົ່າຕໍ່ໄດ້ໃນກໍລະນີທີ່ສັນຍາຍັງມີຜົນບັງຄັບໃຊ້;
5. ສະເໜີຂໍຕໍ່ ຫຼື ລົບລ້າງສັນຍາ ເຊົ່າ/ຊື້ ຫ້ອງ ຫຼື ຮ້ານຂາຍ;
6. ສະເໜີຄຳເຫັນຕໍ່ອົງການຄຸ້ມຄອງຂອງລັດທີ່ກ່ຽວຂ້ອງ ເພື່ອປົກປ້ອງສິດຜົນປະໂຫຍດສ່ວນລວມ ແລະ ສ່ວນຕົວໃນການດຳເນີນທຸລະກິດ;
7. ຮ້ອງທຸກ ຫຼື ຮ້ອງຟ້ອງ ເມື່ອເຫັນວ່າມີການກະທຳທີ່ບໍ່ ຖືກຕ້ອງໃນການປະຕິບັດ ໜ້າທີ່ວຽກງານ ຂອງພະນັກງານລັດ, ຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ ແລະ ຜູ້ບໍລິຫານຈັດການຕະຫຼາດ.

### ມາດຕາ 22. ພັນທະຂອງຊາວຄ້າ-ຂາຍ

ຊາວຄ້າ-ຂາຍມີພັນທະດັ່ງນີ້:

1. ຕ້ອງປະຕິບັດຕາມແຜນການຈັດສັນ, ຈັດວາງຕາມປະເພດສິນຄ້າ;
2. ຕ້ອງປະຕິບັດກົດລະບຽບຂອງຕະຫຼາດ ຢ່າງເຂັ້ມງວດ ແລະ ຢູ່ພາຍໃຕ້ການຄຸ້ມຄອງ ຂອງຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ ແລະ ຜູ້ບໍລິຫານຈັດການຕະຫຼາດ;
3. ຕ້ອງຕິດລາຄາສິນຄ້າຕາມທີ່ໄດ້ລະບຸໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ;
4. ຕ້ອງເສຍພັນທະຕ່າງໆໃຫ້ລັດຕາມລະບຽບກົດໝາຍ;

5. ສຳລັບຜູ້ທີ່ນຳເອົາຜົນຜະລິດຂອງຕົນເອງ, ເຄື່ອງກະສິກຳ, ຫັດຖະກຳຕ່າງໆ ມາຈຳໜ່າຍ ຫຼື ວາງຂາຍຢູ່ພາຍໃນຕະຫຼາດ ຕ້ອງປະຕິບັດຕາມກົດລະບຽບຂອງຕະຫຼາດ;
6. ປະຕິບັດພັນທະອື່ນໆຕາມລະບຽບກົດໝາຍ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 23. ຂໍ້ຫ້າມສຳລັບຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ

ຫ້າມຄະນະກຳມະການ ຈັດສັນ ແລະ ຄຸ້ມຄອງຕະຫຼາດ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງຂອງຕົນ ຫຼື ຜ່ານບຸກຄົນອື່ນ ເພື່ອຜົນປະໂຫຍດສ່ວນຕົວ;
2. ປິດບັງ, ເຊື່ອງອຳ, ຖ່ວງດຶງ, ປອມແປງເອກະສານທາງລັດຖະການ;
3. ອອກຂໍ້ກຳນົດ, ກົດລະບຽບ ແລະ ຕັດສິນບັນຫາໃດໜຶ່ງດ້ວຍຕົນເອງ ທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງ ຕາມລະບຽບກົດໝາຍ ຊຶ່ງສ້າງຄວາມເສຍຫາຍຕໍ່ຊີວິດຊັບສິນລວມໝູ່ ແລະ ບຸກຄົນ;
4. ປົກປິດ, ເຊື່ອງອຳ, ສໍ້ໂກງ ແລະ ສວຍໂອກາດເອົາຊັບສິນຂອງລັດ, ລວມໝູ່ ແລະ ຂອງ ປະຊາຊົນມາ ເປັນຂອງຕົນເອງ, ຄອບຄົວ, ຍາດພີ່ນ້ອງ ແລະ ໝູ່ເພື່ອນໂດຍບໍ່ຖືກຕ້ອງ ຕາມກົດໝາຍ;
5. ເອົາຊັບສິນບັດຂອງລັດ, ລວມໝູ່ ແລະ ຂອງປະຊາຊົນ ເປັນຂອງຂວັນໃຫ້ແກ່ການຈັດຕັ້ງ ແລະ ບຸກຄົນໃດໜຶ່ງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຮັບການຕົກລົງເປັນໝູ່ຄະນະ;
6. ມີພຶດຕິກຳອື່ນ ທີ່ລະເມີດລະບຽບກົດໝາຍກ່ຽວກັບຕະຫຼາດ.

### ມາດຕາ 24. ຂໍ້ຫ້າມສຳລັບຜູ້ບໍລິຫານຈັດການຕະຫຼາດ

ຫ້າມຜູ້ບໍລິຫານຈັດການຕະຫຼາດມີພຶດຕິກຳດັ່ງນີ້:

1. ຕໍ່ເຕີມອາຄານ, ສະຖານທີ່, ຂຶ້ນຄ່າເຊົ່າ ແລະ ຄ່າບໍລິການຕ່າງໆ ໂດຍບໍ່ໄດ້ຮັບ ອານຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ;
2. ອຳນວຍຄວາມສະດວກ ໃຫ້ແກ່ຊາວຄ້າ-ຂາຍນຳສິນຄ້າທີ່ບໍ່ຖືກຕ້ອງ ເຂົ້າມາວາງຂາຍ ພາຍ ໃນຕະຫຼາດ;
3. ເປີດ ຫຼື ປິດ ຕະຫຼາດ ກ່ອນ ຫຼື ເກີນ ເວລາທີ່ໄດ້ກຳນົດ;
4. ສວຍໃຊ້ສະຖານທີ່ຕະຫຼາດເປັນບ່ອນມົ້ວສຸມ, ຫຼິ້ນການພະນັນທຸກປະເພດ ຫຼື ຄ້າ-ຂາຍ ສິນຄ້າທີ່ຕ້ອງຫ້າມ.

### ມາດຕາ 25. ຂໍ້ຫ້າມສຳລັບຊາວຄ້າ-ຂາຍ

ຫ້າມຊາວຄ້າ-ຂາຍມີພຶດຕິກຳດັ່ງນີ້:

1. ຂາຍສິນຄ້າທີ່ຕ້ອງຫ້າມ, ສິນຄ້າບໍ່ຖືກຕ້ອງ, ສິນຄ້າປອມແປງ ລອກຮຽນແບບ, ສິນຄ້າໝົດອາຍຸ ແລະ ສິນຄ້າ ນອກລະບົບຢູ່ພາຍໃນຕະຫຼາດ;
2. ກັກຕຸນສິນຄ້າ, ຂຶ້ນລາຄາສິນຄ້າ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຫຼິ້ນການພະນັນທຸກປະເພດ, ໂຄສະນາເຜີຍແຜ່ສິ່ງລາມົກອານາຈານຢູ່ພາຍໃນຕະຫຼາດ;
4. ນຳໃຊ້ອຸປະກອນວັດແທກຊັ່ງຜອງ ທີ່ບໍ່ໄດ້ມາດຕະຖານ.

# ໝວດທີ 8
# ອົງການຄຸ້ມຄອງວຽກງານຕະຫຼາດ

**ມາດຕາ 26. ອົງການຄຸ້ມຄອງວຽກງານຕະຫຼາດ.**

ອົງການຄຸ້ມຄອງວຽກງານຕະຫຼາດແມ່ນອົງການລັດ ທີ່ມີສິດອຳນາດໃນການຈັດຕັ້ງປະຕິບັດວຽກງານພັດທະນາຕະຫຼາດ ແລະ ສິ່ງເສີມຕາໜ່າງການຄ້າ ໃຫ້ເປັນລະບົບ, ແນໃສ່ ຊຸກຍູ້ການແລກປ່ຽນ, ຊື້-ຂາຍສິນຄ້າ ພາຍໃນຕະຫຼາດ, ຮັບປະກັນການສະໜອງສິນຄ້າທີ່ມີຄຸນນະພາບ, ຄວາມປອດໄພໃຫ້ແກ່ສັງຄົມ ແລະ ສິ່ງແວດລ້ອມ.

**ມາດຕາ 27. ລະບົບການຈັດຕັ້ງຂອງອົງການຄຸ້ມຄອງວຽກງານຕະຫຼາດ**

ອົງການຄຸ້ມຄອງວຽກງານຕະຫຼາດ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແຕ່ ສູນກາງລົງຮອດທ້ອງຖິ່ນປະກອບມີ 3 ຂັ້ນຄື:

– ຂັ້ນສູນກາງແມ່ນ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີພະແນກພັດທະນາຕະຫຼາດ ແລະ ສິ່ງເສີມຕາໜ່າງການຄ້າ ເປັນຜູ້ຊ່ວຍວຽກ;
– ຂັ້ນແຂວງແມ່ນ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໂດຍມີຂະແໜງການຄ້າພາຍໃນ ( ໜ່ວຍງານພັດທະນາຕະຫຼາດ ແລະ ສິ່ງເສີມຕາໜ່າງການຄ້າ ) ເປັນຜູ້ຊ່ວຍວຽກ;
– ຂັ້ນເມືອງແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ໂດຍມີຈຸງານການຄ້າພາຍໃນເປັນຜູ້ຊ່ວຍວຽກ.

**ມາດຕາ 28. ພາລະບົດບາດຂອງອົງການຄຸ້ມຄອງວຽກງານຕະຫຼາດ**

ອົງການຄຸ້ມຄອງວຽກງານຕະຫຼາດມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງອຸດສາຫະກຳ ແລະ ການຄ້າ ໃນການຈັດຕັ້ງປະຕິບັດວຽກງານຕະຫຼາດ ໃນຂອບເຂດທົ່ວປະເທດ.

– ອົງການຄຸ້ມຄອງວຽກງານຕະຫຼາດ ຂັ້ນສູນກາງ ແມ່ນ ກົມການຄ້າພາຍໃນ ຊຶ່ງເປັນເສນາທິການໃຫ້ແກ່ກະຊວງອຸດສາຫະກຳ ແລະ ການຄ້າໃນການຊີ້ນຳ, ນຳພາຈັດຕັ້ງ ປະຕິບັດວຽກງານ ຕະຫຼາດໃນຂອບເຂດທົ່ວປະເທດ;
– ອົງການຄຸ້ມຄອງວຽກງານຕະຫຼາດຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ຊຶ່ງເປັນເສນາທິການໃຫ້ແກ່ຄະນະປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການປະຕິບັດວຽກງານຕະຫຼາດ ໃນຂອບເຂດແຂວງຂອງຕົນ;
– ອົງການຄຸ້ມຄອງວຽກງານ ຕະຫຼາດຂັ້ນເມືອງແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຊຶ່ງເປັນເສນາທິການໃຫ້ແກ່ຄະນະປົກຄອງເມືອງ, ເທດສະບານ, ພະແນກອຸດສາ

ທະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງໃນການຄຸ້ມຄອງວຽກງານຕະຫຼາດໃນຂອບເຂດເມືອງຂອງຕົນ.

### ມາດຕາ 29. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານຕະຫຼາດຂັ້ນສູນກາງ

ອົງການຄຸ້ມຄອງວຽກງານຕະຫຼາດຂັ້ນສູນກາງມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ, ຮ່າງນະໂຍບາຍ ແຜນການພັດທະນາ ແລະ ນິຕິກຳກ່ຽວກັບຕະຫຼາດ ເພື່ອສະເໜີຂັ້ນເທິງພິຈາລະນາປະກາດໃຊ້. ໃຫ້ຂະຫຍາຍຕົວອອກຢ່າງກ້ວາງຂວາງເພື່ອສົ່ງເສີມໃຫ້ປະຊາຊົນຮູ້ຊື້, ຮູ້ຂາຍ ແລະ ເຂົ້າຮ່ວມໃນການຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ;
2. ຄົ້ນຄວ້າ ແລະ ອອກນິຕິກຳ ຫຼື ຄຳແນະນຳທາງດ້ານວິຊາການ ກ່ຽວກັບຕະຫຼາດຢູ່ພາຍໃຕ້ຂອບເຂດສິດ ແລະ ອຳນາດຂອງຕົນ.
3. ເຜີຍແຜ່ນະໂຍບາຍ ຫຼື ລະບຽບການກ່ຽວກັບການພັດທະນາຕະຫຼາດໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ເມືອງ;
4. ກຳນົດຮູບແບບໃບຄຳຮ້ອງ, ບົດສະເໜີໂຄງການກໍ່ສ້າງຕະຫຼາດ ແລະ ລະບຽບການກ່ຽວກັບການຄຸ້ມຄອງ ແລະ ການຈັດສັນຕະຫຼາດ ໃຫ້ລະອຽດຊັດເຈນ ເພື່ອແບ່ງສິດ ແລະ ເຂດຄວາມຮັບຜິດຊອບຂອງຂັ້ນຕ່າງໆ;
5. ຊຸກຍູ້ສ້າງບັນຍາກາດ, ສະພາບແວດລ້ອມທີ່ດຶງດູດ ແລະ ອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດພາຍໃນຕະຫຼາດ;
6. ສົ່ງເສີມ ແລະ ພັດທະນາຕະຫຼາດທັງຢູ່ໃນຕົວເມືອງ ແລະ ຊົນນະບົດ;
7. ແນະນຳ, ອຳນາດການປົກຄອງທ້ອງຖິ່ນ ເພື່ອສ້າງ ຫຼື ດັດແກ້ ແຜນພັດທະນາຕະຫຼາດໃຫ້ແທດເໝາະກັບ ສະພາບເງື່ອນໄຂຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ;
8. ຊີ້ນຳ, ຕິດຕາມ, ກວດກາ, ສະເໜີຍ້ອງຍໍ ແລະ ປະຕິບັດມາດຕະການໃນການຈັດຕັ້ງປະຕິບັດວຽກງານຕະຫຼາດໃນຂອບເຂດທົ່ວປະເທດ;
9. ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແກ້ໄຂ, ປັບປຸງ ບັນດານິຕິກຳ, ທິດທາງການພັດທະນາ ແລະ ການຄຸ້ມຄອງຕະຫຼາດ.

### ມາດຕາ 30. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານຕະຫຼາດຂັ້ນແຂວງ

ອົງການຄຸ້ມຄອງວຽກງານຕະຫຼາດຂັ້ນແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳຂອງຂັ້ນເທິງ
2. ເຜີຍແຜ່ນະໂຍບາຍ ຫຼື ລະບຽບການກ່ຽວກັບການພັດທະນາຕະຫຼາດໃຫ້ປະຊາຊົນ, ຊາວຄ້າ-ຂາຍ ເຂົ້າໃຈ ແລະ ເຂົ້າຮ່ວມໃນການພັດທະນາຕະຫຼາດ;
3. ຈັດຕັ້ງປະຕິບັດແຜນການພັດທະນາຕະຫຼາດ ໃຫ້ຂະຫຍາຍຕົວອອກຢ່າງກ້ວາງຂວາງ ເພື່ອສົ່ງເສີມໃຫ້ປະຊາຊົນຮູ້ຊື້, ຮູ້ຂາຍ ແລະ ເຂົ້າຮ່ວມໃນການຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ;
4. ເຂົ້າຮ່ວມໃນການສ້າງບັນຍາກາດ, ສະພາບແວດລ້ອມທີ່ດຶງດູດ ແລະ ອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດພາຍໃນຕະຫຼາດ;

5. ສ້າງ ຫຼື ດັດແກ້ ແຜນພັດທະນາຕະຫຼາດໃຫ້ແທດເໝາະກັບສະພາບເງື່ອນໄຂຄວາມເປັນຈິງຂອງທ້ອງຖິ່ນຕົນ;
6. ຕິດຕາມ, ກວດກາ, ສະເໜີຍ້ອງຍໍ ແລະ ປະຕິບັດມາດຕະການ ໃນການຄຸ້ມຄອງວຽກງານຕະຫຼາດໃນທ້ອງຖິ່ນຕົນ;
7. ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອສະເໜີແກ້ໄຂ, ປັບປຸງບັນດານິຕິກໍາ, ກ່ຽວກັບວຽກງານພັດທະນາ ແລະ ຄຸ້ມຄອງຕະຫຼາດ;
8. ຮັບຜິດຊອບລວມທຸກການເຄື່ອນໄຫວ ແລະ ລະບົບການຈັດຕັ້ງໃນຕະຫຼາດ;
9. ນໍາສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອອອກຂໍ້ຕົກລົງສ້າງຕັ້ງຕະຫຼາດໃຫຍ່ ຫຼື ສະເໜີ ແຕ່ງຕັ້ງຄະນະກໍາມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ;
10. ປະຕິບັດຕາມສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 31. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານຕະຫຼາດຂັ້ນເມືອງ**

ອົງການຄຸ້ມຄອງວຽກງານຕະຫຼາດຂັ້ນເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ ແຜນຍຸດທະສາດ ແລະ ນິຕິກໍາຂອງຂັ້ນເທິງ;
2. ເຜີຍແຜ່ນະໂຍບາຍ ຫຼື ລະບຽບການກ່ຽວກັບການພັດທະນາຕະຫຼາດໃຫ້ປະຊາຊົນ, ຜູ້ປະກອບການເຂົ້າໃຈ ແລະ ເຂົ້າຮ່ວມໃນການພັດທະນາຕະຫຼາດ;
3. ຈັດຕັ້ງປະຕິບັດແຜນການພັດທະນາຕະຫຼາດ ໃຫ້ຂະຫຍາຍຕົວອອກຢ່າງກ້ວາງຂວາງ ເພື່ອສົ່ງເສີມໃຫ້ປະຊາຊົນຮູ້ຊື້, ຮູ້ຂາຍ ແລະ ເຂົ້າຮ່ວມໃນການຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ;
4. ເຂົ້າຮ່ວມໃນການສ້າງບັນຍາກາດ, ສະພາບແວດລ້ອມທີ່ດຶງດູດ ແລະ ອໍານວຍຄວາມສະດວກໃຫ້ແກ່ການດໍາເນີນທຸລະກິດພາຍໃນຕະຫຼາດ;
5. ສະເໜີ ສ້າງ ຫຼື ດັດແກ້ ແຜນພັດທະນາຕະຫຼາດໃຫ້ແທດເໝາະກັບ ສະພາບເງື່ອນໄຂຄວາມເປັນຈິງຂອງທ້ອງຖິ່ນຕົນ;
6. ຕິດຕາມ, ກວດກາ, ສະເໜີຍ້ອງຍໍ ແລະ ປະຕິບັດມາດຕະການ ໃນການຄຸ້ມຄອງວຽກງານຕະຫຼາດໃນທ້ອງຖິ່ນຕົນ;
7. ຮັບຜິດຊອບລວມທຸກການເຄື່ອນໄຫວ ແລະ ລະບົບການຈັດຕັ້ງໃນຕະຫຼາດ;
8. ນໍາສະເໜີເຈົ້າເມືອງ ເພື່ອອອກຂໍ້ຕົກລົງສ້າງຕັ້ງຕະຫຼາດກາງ ແລະ ນ້ອຍ ຫຼື ສະເໜີແຕ່ງຕັ້ງຄະນະກໍາມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ;
9. ປະຕິບັດຕາມສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 32. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຄຸ້ມຄອງ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

**ມາດຕາ 33. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ທາງວິໄນ, ປັບໃໝ, ທາງແພ່ງ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 10
## ການຈັດຕັ້ງປະຕິບັດ

**ມາດຕາ 34. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນ, ພະແນກອຸດສາຫະກໍາ ແລະ ການຄ້າຂັ້ນແຂວງ ແລະ ຫ້ອງການອຸດສາຫະກໍາ ແລະການຄ້າຂັ້ນເມືອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ທຸກໆພາກສ່ວນທີ່ກ່ຽວຂ້ອງ ບຸກຄົນ, ນິຕິບຸກຄົນ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 35. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ກໍານົດ ສະບັບເລກທີ 0755/ກຄ.ພນ, ລົງວັນທີ 20 ມິຖຸນາ 2001.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກໍາ ແລະ ການຄ້າ

ດຣ. ນາມ ວິຍະເກດ

# ສາລະບານ


ໝວດທີ 1 ຫລັກການທົ່ວໄປ ........................................ 1
ມາດຕາ 1. ຈຸດປະສົງ ........................................ 1
ມາດຕາ 2. ຕະຫຼາດ ........................................ 1
ມາດຕາ 3. ການອະທິບາຍຄຳສັບ ........................................ 2
ມາດຕາ 4. ຫຼັກການພື້ນຖານການພັດທະນາຕະຫຼາດ ........................................ 2
ມາດຕາ 5. ຂອບເຂດການນຳໃຊ້........................................ 2
ໝວດທີ 2 ການສ້າງຕັ້ງ, ຂະໜາດ, ມາດຕະຖານ ແລະ ເງື່ອນໄຂກ່ຽວກັບຕະຫຼາດ........................................ 2
ມາດຕາ 6. ການສ້າງຕັ້ງຕະຫຼາດ ........................................ 2
ມາດຕາ 7. ຂະໜາດຂອງຕະຫຼາດ ........................................ 3
ມາດຕາ 8. ຕະຫຼາດໃຫຍ່........................................ 3
ມາດຕາ 9. ຕະຫຼາດກາງ ........................................ 4
ມາດຕາ 10. ຕະຫຼາດນ້ອຍ ........................................ 4
ມາດຕາ 11. ເງື່ອນໄຂຂອງຜູ້ທີ່ຂໍອະນຸຍາດສ້າງຕັ້ງຕະຫຼາດ ........................................ 5
ມາດຕາ 12. ຂັ້ນຕອນການຂໍອະນຸຍາດສ້າງຕັ້ງຕະຫຼາດ ........................................ 5
ມາດຕາ 13. ການແບ່ງຂັ້ນອະນຸຍາດສ້າງຕັ້ງຕະຫຼາດ ........................................ 6
ໝວດທີ 3 ຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ........................................ 6
ມາດຕາ 14. ຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ........................................ 6
ມາດຕາ 15. ໜ້າທີ່ຂອງຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ. ........................................ 6
ມາດຕາ 16. ກົດລະບຽບຂອງຕະຫຼາດ ........................................ 6
ໝວດທີ 4 ສິດ ແລະ ພັນທະຂອງຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ........................................ 7
ມາດຕາ 17. ສິດຂອງຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ........................................ 7
ມາດຕາ 18. ພັນທະຂອງຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ ........................................ 7
ໝວດທີ 5 ສິດ ແລະ ພັນທະຂອງຜູ້ບໍລິຫານຈັດການຕະຫຼາດ........................................ 7
ມາດຕາ 19. ສິດຂອງຜູ້ບໍລິຫານຈັດການຕະຫຼາດ........................................ 7
ມາດຕາ 20. ພັນທະຂອງຜູ້ບໍລິຫານຈັດການຕະຫຼາດ ........................................ 7
ໝວດທີ 6 ສິດ ແລະ ພັນທະຂອງຊາວຄ້າ-ຂາຍ........................................ 8
ມາດຕາ 21. ສິດຂອງຊາວຄ້າ-ຂາຍ ........................................ 8
ມາດຕາ 22. ພັນທະຂອງຊາວຄ້າ-ຂາຍ ........................................ 8
ໝວດທີ 7 ຂໍ້ຫ້າມ........................................ 9
ມາດຕາ 23. ຂໍ້ຫ້າມສຳລັບຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ ........................................ 9
ມາດຕາ 24. ຂໍ້ຫ້າມສຳລັບຜູ້ບໍລິຫານຈັດການຕະຫຼາດ ........................................ 9

ມາດຕາ 25. ຂໍ້ຫ້າມສຳລັບຊາວຄ້າ-ຂາຍ .................................................................................. 9
ໝວດທີ 8 ອົງການຄຸ້ມຄອງວຽກງານຕະຫຼາດ................................................................................10
ມາດຕາ 26. ອົງການຄຸ້ມຄອງວຽກງານຕະຫຼາດ. ............................................................................ 10
ມາດຕາ 27. ລະບົບການຈັດຕັ້ງຂອງອົງການຄຸ້ມຄອງວຽກງານຕະຫຼາດ .................................... 10
ມາດຕາ 28. ພາລະບົດບາດຂອງອົງການຄຸ້ມຄອງວຽກງານຕະຫຼາດ ......................................... 10
ມາດຕາ 29. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານຕະຫຼາດຂັ້ນສູນກາງ ........................ 11
ມາດຕາ 30. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານຕະຫຼາດຂັ້ນແຂວງ ........................... 11
ມາດຕາ 31. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານຕະຫຼາດຂັ້ນເມືອງ........................... 12
ໝວດທີ 9 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ............................................ 13
ມາດຕາ 32. ນະໂຍບາຍຕໍ່ຜູ້ມີຜົນງານ..................................................................................... 13
ມາດຕາ 33. ມາດຕະການຕໍ່ຜູ້ລະເມີດ....................................................................................... 13
ໝວດທີ 10 ການຈັດຕັ້ງປະຕິບັດ................................................................................................ 13
ມາດຕາ 34. ການຈັດຕັ້ງປະຕິບັດ ............................................................................................ 13
ມາດຕາ 35. ຜົນສັກສິດ .......................................................................................................... 13